**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະ ການລົງທຶນ

ກົມແຜນການ

ເລກທີ: 1933 /ກຜທ.ກຜ1

ນະຄອນຫຼວງວຽງຈັນ, ວັນທີ: 01 ພະຈິກ 2023

# ໜັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນ
# ໂຄງການລົງທຶນຂອງລັດ ກົມແຜນການ, ກະຊວງ ແຜນການ ແລະ ການລົງທຶນ
# ປະຈໍາປີ 2023

ກົມແຜນການ, ກະຊວງແຜນການ ແລະ ການລົງທຶນ ໄດ້ຮັບອະນຸມັດງົບປະມານຂອງລັດ ປະຈຳປີ 2023 ເພື່ອດຳເນີນໂຄງການປັບປຸງຖານຂໍ້ມູນຂອງກົມແຜນການ ກະຊວງແຜນການ ແລະ ການລົງທຶນ. ສະນັ້ນ, ກົມແຜນການ, ກະຊວງແຜນການ ແລະ ການລົງທຶນ ຈຶ່ງຂໍແຈ້ງເຊີນບໍລິສັດ ຂອງທ່ານ ເພື່ອເຂົ້າຮ່ວມປະມູນ ໂຄງການດັ່ງກ່າວ, ເຊິ່ງມີລາຍລະອຽດດັ່ງນີ້:

1. ຂໍແຈ້ງເຊີນບັນດາບໍລິສັດ, ຫ້າງ/ຮ້ານ ທີ່ມີຄວາມສົນໃຈ ແລະ ມີເງື່ອນໄຂຄົບຖ້ວນ ເຂົ້າຍື່ນຊອງປະມູນ.
2. ການປະມູນຈະດຳເນີນຕາມຂັ້ນຕອນ ຂອງລະບຽບການປະມູນທຸກປະການ, ທີ່ໄດ້ລະບຸໄວ້ໃນຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນນີ້ ແມ່ນເປີດກ້ວາງໃຫ້ທຸກໆບໍລິສັດ, ຫ້າງ/ຮ້ານ ນິຕິບຸກຄົນພາຍໃນ ທີ່ດຳເນີນທຸລະກິດຢູ່ ນະຄອນຫຼວງວຽງຈັນ, ມີໃບທະບຽນວິສາຫະກິດຂະແໜງການທີ່ກ່ຽວຂ້ອງ, ມີເລກປະຈຳຕົວເສຍອາກອນ ແລະ ໃບຢັ້ງຢືນການປະຕິບັດພັນທະພາສີ, ອາກອນ ຖືກຕ້ອງຕາມກົດໝາຍ.
4. ບໍລິສັດ, ຫ້າງ/ຮ້ານ ທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນຊື້ເອກະສານປະມູນຄົບຊຸດໄດ້ທີ່ ກົມແຜນການ, ກະຊວງແຜນການ ແລະ ການລົງທຶນ (ໂທລະສັບ: 856-21 216752) ສຳນັກງານຕັ້ງຢູ່ ຖະໜົນສຸພານຸວົງ, ບ້ານສີຖານເໜືອ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ໃນໂມງລັດຖະການ 8:00-12:00 ໂມງ ແລະ13:30-16:00 ໂມງ, ເລີ່ມຂາຍຊອງ ປະມູນແຕ່ວັນທີ 01 ພະຈິກ 2023 ເປັນຕົ້ນໄປ ຮອດວັນທີ 30 ພະຈິກ 2023 ລາຄາຊອງປະມູນຊອງລະ 350.000 ກີບ (ສາມແສນຫ້າສິບພັນກີບຖ້ວນ) ຈຳນວນເງິນດັ່ງກ່າວນີ້ ແມ່ນຈະບໍ່ໄດ້ສົ່ງຄືນ.
5. ກຳນົດສົ່ງຊອງປະມູນ ຕ້ອງສົ່ງໃຫ້ກົມແຜນການ, ກະຊວງແຜນການ ແລະ ການລົງທຶນກ່ອນເວລາ 13:00 ໂມງ ຂອງວັນທີ 04 ທັນວາ 2023. ເປີດຊອງປະມູນແມ່ນເວລາ 14:00 ໂມງ ຂອງວັນທີ 05 ທັນວາ 2023, ທີ່ຫ້ອງປະຊຸມຊັ້ນ III ກົມແຜນການ, ກະຊວງ ແຜນການ ແລະ ການລົງທຶນ.

**ຫົວໜ້າກົມ**

ອຸລາ ສົມຈັນມະວົງ